**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຈຳປາສັກ

ເລກທີ 05 /ຈຂ.ຈສ

ແຂວງຈຳປາສັກ, ວັນທີ 6 ພຶດສະພາ 2021

# ຄຳສັ່ງ

## ວ່າດ້ວຍການ ເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໄລຍະວັນທີ 07 -20 ພຶດສະພາ 2021

ເຖິງ:
- ທ່ານ ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ;
- ເຈົ້ານະຄອນປາກເຊ, ເຈົ້າເມືອງ ແລະ ນາຍບ້ານທົ່ວແຂວງຈຳປາສັກ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດທີ່ດຳລົງຊີວິດຢູ່ແຂວງຈຳປາສັກ.

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ ສະບັບເລກທີ 34/ສພຊ, ລົງວັນທີ 09 ພະຈິກ 2017.
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19.
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 462 / ຫສນຍ, ລົງວັນທີ 05 ພຶດສະພາ 2021

### ເຈົ້າແຂວງຈຳປາສັກ ອອກຄຳສັ່ງ:

1. ໃຫ້ຫົວໜ້າກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການ, ກົມກອງອ້ອມຂ້າງແຂວງ ເຈົ້ານະຄອນປາກເຊ, ເຈົ້າເມືອງ, ນາຍບ້ານ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດທີ່ດຳລົງຊີວິດຢູ່ແຂວງຈຳປາສັກ ສືບຕໍ່ປະຕິບັດ ຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 87/ຄສລພ, ລົງວັນທີ 25 ເມສາ 2021 ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 462 / ຫສນຍ, ລົງວັນທີ 05 ພຶດສະພາ 2021 ຢ່າງເຂັ້ມງວດ.

2. ໃຫ້ຫົວໜ້າພະແນກການ, ກົມກອງອ້ອມຂ້າງແຂວງ, ອົງການປົກຄອງນະຄອນປາກເຊ, 9 ເມືອງ ແລະ ອົງການປົກຄອງບ້ານ ສືບຕໍ່ເພີ່ມທະວີການໂຄສະນາເຜີຍແຜ່, ສຶກສາອົບຮົມຢ່າງກວ້າງຂວາງ ແລະເລິກເຊິ່ງ ດ້ວຍຫຼາຍຮູບແບບ ແລະວິທີການ ເພື່ອເຮັດໃຫ້ພົນລະເມືອງລາວ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະຊາວຕ່າງປະເທດ ທີ່ອາໃສ ແລະ ດຳລົງຊີວິດ ຢູ່ແຂວງຈຳປາສັກ ເຫັນໄດ້ໄພອັນຕະລາຍຂອງພະຍາດໂຄວິດ-19 ທີ່ມີການກາຍພັນ ແລະມີຄວາມຮຸນແຮງເພີ່ມຂຶ້ນ ພ້ອມທັງຮູ້ຈັກວິທີສະກັດກັ້ນ, ຄວບຄຸມ ແລະແກ້ໄຂພະຍາດນີ້ ດ້ວຍຕົນເອງ ພ້ອມທັງເຫັນໄດ້ຄວາມຈຳເປັນຂອງລັດຖະບານ ແລະອົງການປົກຄອງແຂວງ ໃນການປະກາດໃຊ້ມາດຕະການຕ່າງໆ ເພື່ອສະກັດກັ້ນ, ຄວບຄຸມ ແລະແກ້ໄຂການລະບາດຂອງພະຍາດດັ່ງກ່າວ ເພື່ອປົກປ້ອງສຸຂະພາບ ແລະຊີວິດຂອງປະຊາຊົນລາວ ແລະຄົນຕ່າງປະເທດ ຢູ່ແຂວງຈຳປາສັກ.

3. ໃຫ້ພະນັກງານ, ລັດຖະກອນ ຢຸດການມາເຮັດວຽກຢູ່ຫ້ອງການ ແຕ່ວັນທີ 07-20 ພຶດສະພາ 2021; ຍົກເວັ້ນ ກຳລັງທະຫານ, ຕຳຫຼວດ, ເຈົ້າໜ້າທີ່ດັບເພີງ, ພະນັກງານຮັບຜິດຊອບລະບົບການບໍລິການໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ການສື່ສານ, ທະນາຄານ, ບໍລິສັດຮັກສາຄວາມປອດໄພ, ຂົນສົ່ງສິນຄ້າອຸປະໂພກ-ບໍລິໂພກ, ຫ້ອງການຄຸ້ມຄອງ



สแกนด้วย CamScanner

ແລະ ບໍລິການສາທາລະນະ, ແພດໝໍ, ອາສາສະໝັກ, ພະນັກງານ-ລັດຖະກອນ ທີ່ໄດ້ຮັບການມອບໝາຍ-ອະນຸຍາດໃຫ້ປະຈຳການ ແລະຜູ້ເຮັດວຽກສະກັດກັ້ນ, ຄວບຄຸມ ແລະ ປິ່ນປົວ ຜູ້ຕິດເຊື້ອພະຍາດໂຄວິດ-19; ມອບໃຫ້ ພະແນກການ, ອົງການທຽບເທົ່າ, ເຈົ້ານະຄອນປາກເຊ ແລະ ເຈົ້າເມືອງ 9 ເມືອງ ຮັບຮ້ອນຈັດຕັ້ງ ແລະ ແນະນຳພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຮັດວຽກທາງລັດຖະການ ຢູ່ເຮືອນ ຫຼື ທີ່ພັກອາໄສ ໂດຍຜ່ານລະບົບສື່ສານ, ອີເລັກໂຕຣນິກ ແລະ ເຄືອຂ່າຍອິນເຕີເນັດ ເຊັ່ນ: ໂທລະສັບ, ອີເມວ, ສື່ສັງຄົມອອນລາຍຕ່າງໆ; ພ້ອມດຽວກັນນັ້ນ ໃຫ້ຈັດຕັ້ງຜູ້ປະຈຳການ, ເວນຍາມສຳນັກງານ, ອົງການ ຢ່າງເປັນປົກກະຕິ ໃຫ້ສາມາດປະສານງານໄດ້ໃນກໍລະນີມີວຽກຈຳເປັນ ເພື່ອປ້ອງກັນບໍ່ໃຫ້ເກີດເຫດຮ້າຍ ສ້າງຄວາມເສຍຫາຍຕ່າງໆ ຢ່າງເດັດຂາດ.

4. ຫ້າມປະຊາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ນັກບວດ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ອາໄສ ແລະ ດຳລົງຊີວິດຢູ່ນະຄອນປາກເຊ ແລະ 9 ເມືອງ ອອກຈາກເຮືອນ ຫຼື ທີ່ພັກອາໄສຂອງຕົນ, ຍົກເວັ້ນກໍລະນີທີ່ຈຳເປັນເຊັ່ນ: ໄປຊື້ເຄື່ອງອຸປະໂພກ-ບໍລິໂພກ (ອະນຸຍາດໃຫ້ຄອບຄົວລະ 1 ຄົນ ເຂົ້າ-ອອກ ໂດຍມີໃບອະນຸຍາດຂອງບ້ານກ່ຽວຂ້ອງ), ໄປໂຮງໝໍ, ໄປປະຕິບັດໜ້າທີ່ໃນກິດຈະການທີ່ລະບຸໄວ້ໃນຂໍ້ທີ 03 ຂອງຄຳສັ່ງສະບັບນີ້ ແລະ ໄປປະຕິບັດໜ້າທີ່ຕາມການມອບໝາຍຂອງການຈັດຕັ້ງ; ສ່ວນຜູ້ທີ່ຈຳເປັນຕ້ອງໄປເຮັດການຜະລິດກະສິກຳ ເພື່ອເປັນສະບຽງອາຫານ, ຜູ້ໄປຄ້າຂາຍ ເຄື່ອງອຸປະໂພກ-ບໍລິໂພກ ກໍ່ສາມາດປະຕິບັດໄດ້ ແຕ່ມອບໃຫ້ອຳນາດການປົກຄອງບ້ານເປັນຜູ້ກວດກາ, ຄຸ້ມຄອງດ້ານຈຳນວນ ແລະ ຂອບເຂດຢ່າງຮັດກຸມ ເພື່ອບໍ່ໃຫ້ມີຄວາມສ່ຽງຕໍ່ການລະບາດຂອງພະຍາດໂຄວິດ-19.
   - ໃຫ້ຢຸດຕິການສັນຈອນ ໄປ-ມາ ນັບແຕ່ເວລາ 20.00ໂມງ ເຖິງ 05.00 ໂມງ, ຍົກເວັ້ນການເຄື່ອນໄຫວຂອງເຈົ້າໜ້າທີ່ ແລະຄະນະສະເພາະກິດ ທີ່ໄດ້ລະບຸໄວ້ໃນ ຂໍ້ທີ 03 ຂອງຄຳສັ່ງສະບັບນີ້.

5. ຫ້າມຈັດກິດຈະກຳ, ປະຊຸມ ຫຼືໂຮມຊຸມນຸມຕ່າງໆ, ງານບຸນປະເພນີ, ກິດຈະກຳທາງສາສະໜາ, ງານດອງ ແລະງານລ້ຽງສັງສັນຕ່າງໆ; ຍົກເວັ້ນ ງານສົບ-ງານສົ່ງສະການ-ແຈກເຂົ້າ ແຕ່ໃຫ້ປະຕິບັດມາດຕະການປ້ອງກັນ ຕາມການແນະນຳຂອງຄະນະສະເພາະກິດ ເຊັ່ນ: ມີການກວດອຸນຫະພູມ, ຮັກສາໄລຍະຫ່າງ, ໃສ່ຜ້າປິດປາກ-ດັງ, ລ້າງມືໃສ່ສະບູ ຫຼື ນ້ຳຢາຂ້າເຊື້ອຢ່າງເຂັ້ມງວດ.

   - ໃຫ້ສືບຕໍ່ປິດຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານກິນດື່ມ, ຮ້ານບໍລິການນວດ ແລະ ສະປາທຸກປະເພດ, ສະຖານທີ່ອອກກຳລັງກາຍ ແລະ ຫຼິ້ນກິລາ, ຮ້ານເກມອອນລາຍ ແລະ ຕະຫຼາດກາງຄືນ; ສຳລັບຮ້ານຂາຍອາຫານ ແມ່ນອະນຸຍາດໃຫ້ຂາຍໄດ້, ແຕ່ຊື້ ກັບບ້ານໄດ້ເທົ່ານັ້ນ ແຕ່ບໍ່ໃຫ້ເກີນເວລາ 19:30 ໂມງ.

6. ຫ້າມຄົນຢູ່ແຂວງຈຳປາສັກ ເດີນທາງໄປຕ່າງແຂວງ, ຫ້າມຄົນຕ່າງແຂວງ ເດີນທາງເຂົ້າແຂວງຈຳປາສັກ, ຍົກເວັ້ນຜູ້ທີ່ມີພູມລຳເນົາ, ເຮັດວຽກປະຈຳຢູ່ແຂວງຈຳປາສັກ, ຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ; ໃຫ້ໂຈະການບໍລິການລົດຂົນສົ່ງໂດຍສານສາທາລະນະລະຫວ່າງແຂວງ ແລະ ລະຫວ່າງເມືອງ.

   - ສຳລັບຜູ້ທີ່ມີຄວາມຈຳເປັນ ຕ້ອງເດີນທາງໄປປະຕິບັດໜ້າທີ່ຢູ່ຕ່າງແຂວງ ຕ້ອງມີໃບຢັ້ງຢືນການກວດເກັບຕົວຢ່າງຫາເຊື້ອໂຄວິດ-19 ( PCR ) ພາຍໃນ 72 ຊົ່ວໂມງ ຫຼື ມີໃບຢັ້ງຢືນການສັກວັກຊີນປ້ອງກັນພະຍາດໂຄວິດ-19 ເພື່ອສະເໜີຄະນະສະເພາະກິດຂັ້ນແຂວງ ເຊິ່ງມີທີ່ຕັ້ງຢູ່ ພະແນກແຜນການ-ການລົງທຶນແຂວງ ເພື່ອ ອອກໃບຢັ້ງຢືນການເດີນທາງ; ສຳລັບຜູ້ທີ່ມີຄວາມຈຳເປັນຕ້ອງເດີນທາງລະຫວ່າງເມືອງ ພາຍໃນແຂວງ ແມ່ນໃຫ້ຂໍໜັງສືອະນຸມັດການເດີນທາງນຳ ຄະນະສະເພາະກິດຂັ້ນນະຄອນ / ເມືອງ ເຊິ່ງມີທີ່ຕັ້ງຢູ່ຫ້ອງວ່າການນະຄອນ / ຫ້ອງວ່າການເມືອງ ໃນເວລາລັດຖະການ.

7. ຫ້າມກັກຕຸນ, ຂຶ້ນລາຄາສິນຄ້າ ທີ່ນຳໃຊ້ເຂົ້າໃນການປ້ອງກັນພະຍາດໂຄວິດ-19 ເປັນຕົ້ນ: ຜ້າປິດປາກ-ດັງ, ນ້ຳຢາລ້າງມື, ຢາປົວພະຍາດ, ອຸປະກອນການແພດ ແລະສິນຄ້າທີ່ກະທົບໄວ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ; ໃຫ້ເຈົ້າໜ້າທີ່ກວດກາການຄ້າ ເອົາໃຈໃສ່ເປັນພິເສດໃນການຕິດຕາມ, ກວດກາ ສະພາບການ



สแกนด้วย CamScanner

ເໜັງຕີງຂອງລາຄາສິນຄ້າ ແລະ ສົມທົບ ກັບ ເຈົ້າໜ້າທີ່ຕຳຫຼວດ ດຳເນີນມາດຕະການຕໍ່ພາກສ່ວນທີ່ສວຍໂອ ກາດກັກຕຸນ, ຂຶ້ນລາຄາ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

8. ໃຫ້ອົງການປົກຄອງ ແລະ ຄະນະສະເພາະກິດນະຄອນປາກເຊ ແລະ 9 ເມືອງ ຊີ້ນຳກອງບັນຊາການ ປກຊ-ປກສ, ບັນດາຫ້ອງການອ້ອມຂ້າງ ແລະ ບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຈັດຕັ້ງປະຕິບັດມາດຕະການທີ່ກຳນົດອອກໃນຄຳສັ່ງສະບັບນີ້, ພ້ອມທັງຈັດຕັ້ງໜ່ວຍງານເຝົ້າລະວັງ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ; ກວດກາ, ຊອກຄົ້ນກໍລະນີສົງໃສ ພາຍໃນບໍລິເວນບ້ານ, ຄອບຄົວທີ່ມີຜູ້ຕິດເຊື້ອ ລວມທັງບ້ານ ແລະຊຸມຊົນຕ່າງໆ ທີ່ມີຄວາມສ່ຽງຕໍ່ການແຜ່ລະບາດ ເພື່ອຮັບປະກັນຄວາມປອດໄພໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເຜີຍແຜ່ຂໍ້ມູນກ່ຽວກັບການປ້ອງກັນຕົນເອງ ຈາກພະຍາດໂຄວິດ-19. ສຳລັບ ສະມາຊິກຄອບຄົວ ຂອງຜູ້ຕິດເຊື້ອ ແລະ ຜູ້ສຳຜັດໃກ້ຊິດ ກັບຜູ້ຕິດເຊື້ອພະຍາດໂຄວິດ-19 ໃຫ້ກັກກັນບໍລິເວນຢູ່ໃນເຮືອນຂອງຕົນ ແລະ ຈິງໃຈລາຍງານຂໍ້ມູນສະພາບການເຄື່ອນໄຫວຕ່າງໆ ໄລຍະ 14 ວັນຜ່ານມາ ໃຫ້ຄະນະສະເພາະກິດຢ່າງຮີບດ່ວນ.

9. ມອບໃຫ້ກອງບັນຊາການ ປກຊ, ປກສ ແຂວງ ສົມທົບກັບກຳລັງຫຼວງ ແລະ ກອງບັນຊາການນະຄອນປາກເຊ ແລະ 09 ເມືອງ ເພີ່ມທະວີການກວດກາຄວາມເປັນລະບຽບຮຽບຮ້ອຍໃນການສັນຈອນໄປ-ມາ, ການລະເມີດຂອງຮ້ານກິນດື່ມບັນເທີງ ແລະ ກິດຈະກຳທີ່ເກືອດຫ້າມ ໂດຍສ້າງໜ່ວຍງານສະເພາະກິດເຄື່ອນທີ່ລາດຕະເວນຕິດຕາມ ແລະ ປ້ອງກັນເວນຍາມຢູ່ຈຸດຕ່າງໆ ໃນເຂດສະບານນະຄອນປາກເຊ ແລະ 09 ເມືອງ ຕະຫຼອດ 24 ຊົ່ວໂມງ ຢ່າງເຂັ້ມງວດ.

9.1 ໃຫ້ສືບຕໍ່ຕັ້ງຈຸດກວດກາການເຂົ້າ-ອອກແຂວງຈຳປາສັກຄື: 1) ບ້ານນາດ່ານຫລັກ 44 ເມືອງຊະນະສົມບູນ, 2) ບ້ານແກ້ງເກຍ ເມືອງບາຈຽງຈະເລີນສຸກ, 3) ບ້ານໜອງອີ່ໂອຍ ເມືອງປາກຊ່ອງ, 4) ບ້ານກອງຕຸ່ນ ເມືອງປາກຊ່ອງ, 5) ບ້ານນາຝັ່ງ ຫລັກ 84 ເມືອງໂຊງ, 6) ຫລັກ30 ເມືອງໂພນທອງ.

9.2 ໃຫ້ສືບຕໍ່ຕັ້ງຈຸດກວດກາການເຂົ້າ-ອອກນະຄອນປາກເຊ 04 ຈຸດຄື: 1) ຈຸດຫຼັກ 08 ເໜືອ, 2) ຈຸດກວດກາພາສີຫຼັກ 10 ເມືອງບາຈຽງຈະເລີນສຸກ, 3) ຈຸດບ້ານຫຼັ່ມສັກເໜືອ ເມືອງບາຈຽງຈະເລີນສຸກ, 4) ຈຸດບ້ານຄັນແຍງ ເມືອງໂພນທອງ; ສະເພາະ ນະຄອນປາກເຊ ສາມາດຕັ້ງຈຸດກວດກາກັ່ນກອງເພີ່ມເຕີມ ຕາມຄວາມເໝາະສົມ.

9.3 ໃຫ້ອົງການປົກຄອງນະຄອນປາກເຊ ແລະ ເມືອງ ໃຫ້ການຊີ້ນຳເຈົ້າໜ້າທີ່ ປກສ ກຸ່ມບ້ານ, ປກສ ບ້ານ, ກອງຫຼອນບ້ານ, ຕັ້ງຈຸດກວດກາຄົນເຂົ້າ-ອອກ ບ້ານຂອງຕົນຢ່າງເຂັ້ມງວດ.

9.4 ເມືອງທີ່ມີຊາຍແດນທາງບົກ ໃຫ້ສົມທົບກັບກອງຮ້ອຍຊາຍແດນ ເພີ່ມທະວີການກວດກາ-ລາດຕະເວນຕາມຊ່ອງທາງທຳມະຊາດ ຂອງບັນດາເມືອງ; ສ່ວນເມືອງທີ່ມີຊາຍແດນທາງນ້ຳລະຫວ່າງປະເທດ ໃຫ້ເອົາໃຈໃສ່ຕິດຕາມ, ກວດກາ ແລະ ຄຸ້ມຄອງການ ນຳໃຊ້ເຮືອຢ່າງເຂັ້ມງວດ.

10. ໃຫ້ພະແນກສາທາລະນະສຸກແຂວງ ສືບຕໍ່ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດ ແຈ້ງການ ຂອງຄະນະສະເພາະກິດຂັ້ນແຂວງ ສະບັບເລກທີ 23/ຈຂ.ຈສ, ລົງວັນທີ 3 ພຶດສະພາ 2021, ກ່ຽວກັບ ການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ແລະ ເພີ່ມທະວີຄວາມເອົາໃຈໃສ່ ຈັດຕັ້ງປະຕິບັດ 10 ຂັ້ນຕອນ ການເຝົ້າລະວັງ ແລະຄວບຄຸມການລະບາດໃນຊຸມຊົນ ໂດຍສົມທົບກັບອົງການປົກຄອງນະຄອນ, ເມືອງ ແລະ ບ້ານ.

11. ໃຫ້ອົງການປົກຄອງແຂວງ, ນະຄອນ ແລະ ເມືອງ ເພີ່ມທະວີການປະຕິບັດບົດບາດ, ສິດ ແລະໜ້າທີ່ຂອງຕົນ ຈັດຕັ້ງປະຕິບັດມາດຕະການທີ່ກຳນົດໄວ້ໃນຄຳສັ່ງສະບັບນີ້ຢ່າງເຂັ້ມງວດ, ໃນກໍລະນີພົບເຫັນການລະເມີດຕໍ່ຄຳສັ່ງສະບັບນີ້ ແມ່ນໃຫ້ດຳເນີນມາດຕະການຕາມກົດໝາຍ ແລະ ລະບຽບການ ຕາມແຕ່ລະກໍລະນີ ຢ່າງເຂັ້ມງວດ.



สแกนด้วย CamScanner

12. ໃນການຈັດຕັ້ງປະຕິບັດຕົວຈິງ, ຖ້າມີຄວາມຈຳເປັນກໍ່ມອບໃຫ້ຄະນະສະເພາະກິດຂັ້ນແຂວງ, ຂັ້ນນະຄອນ ແລະ ຂັ້ນເມືອງ ອອກນິຕິກຳ ແນະນຳການຈັດຕັ້ງປະຕິບັດເປັນອັນລະອຽດຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ.

13. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນທີ 07 ຫາ 20 ພຶດສະພາ 2021. ໃນກໍລະນີທີ່ມີການປ່ຽນແປງ ອົງການປົກຄອງແຂວງຈະແຈ້ງໃຫ້ຊາບຕື່ມເປັນແຕ່ລະໄລຍະ.

**ເຈົ້າແຂວງ**

ປອ ວິໄລວົງ ບຸດດາຄຳ

**ບ່ອນນຳສົ່ງ:**
- ຄະນະສະເພາະກິດຂັ້ນແຂວງ
- ຄະນະສະເພາະກິດຂັ້ນເມືອງ-ນະຄອນ
- ພະແນກການ, ກົມກອງອ້ອມຂ້າງ
- ອົງການຈັດຕັ້ງຕ່າງໆທົ່ວແຂວງ
- ສຳເນົາ



สแกนด้วย CamScanner